## 6. ຄວາມສ່ຽງທີ່ບໍ່ໄປຈົດທະບຽນການປ່ຽນແປງຕອນດິນ

ລັດຈະບໍ່ຮັບຮູ້ການປ່ຽນແປງຕອນດິນຢ່າງເປັນທາງການ ແລະ ສິດຜົນປະໂຫຍດທີ່ສ້າງຂຶ້ນ



- ກໍລະນີທີ່ໄດ້ຂາຍທີ່ດິນສ່ວນໃດສ່ວນໜຶ່ງໄປແລ້ວເຈົ້າຂອງທີ່ດິນ ຍັງຈະສືບຕໍ່ເສຍຄ່າທຳນຽມນຳໃຊ້ທີ່ດິນຈຳນວນເທົ່າເດີມ.



- ກໍລະນີການເກີດຂໍ້ຂັດແຍ່ງກ່ຽວກັບຕອນດິນທີ່ມີການປ່ຽນແປງ ເຈົ້າຂອງທີ່ດິນອາດສູນເສຍສິດຜົນປະໂຫຍດທີ່ຄວນໄດ້ຮັບ,ເພາະບໍ່ມີຫຼັກຖານອ້າງອີງທາງດ້ານກົດໝາຍ.






**ສະໜັບສະໜູນການພິມໂດຍ:**

**ສອບຖາມຂໍ້ມູນເພີ່ມເຕີມ:**

**ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ອົງການຄຸ້ມຄອງທີ່ດິນ**

ໂທ 021 263225, ແຟັກ 021 262300

ອົງການ ຄຸ້ມຄອງທີ່ດິນ ປະຈຳແຂວງ.

ອົງການ ຄຸ້ມຄອງທີ່ດິນ ປະຈຳເມືອງ.

ໜ່ວຍງານທີ່ດິນ ປະຈຳບ້ານ.


ອ ຄ ດ

ອົງການຄຸ້ມຄອງທີ່ດິນ

# ການຈັດທະບຽນແບ່ງແຍກ ແລະ ໂຮມຕອນດິນເຂົ້າກັນ





## 1. ການແບ່ງແຍກຕອນດິນ

ການແບ່ງແຍກຕອນດິນ ແມ່ນການແບ່ງຕອນດິນຈາກ 1 ຕອນອອກເປັນ 2 ຕອນຂຶ້ນໄປ, ການແບ່ງແຍກຕອນດິນສາມາດດຳເນີນພ້ອມກັບການມອບ- ໂອນ ຫຼື ກັບການສືບທອດມູນມໍຣະດົກ. ການແບ່ງແຍກຕອນດິນແມ່ນບໍ່ສາມາດດຳເນີນໃນ ກໍລະນີ ທີ່ຈະເຮັດໃຫ້ເກີດມີຕອນດິນຖືກປິດລ້ອມດ້ວຍຕອນດິນອື່ນ.



## ປະເພດການແບ່ງແຍກຕອນດິນ

- ການແບ່ງແຍກອອກຊື່ ແລະ ນາມສະກຸນເດີມ
- ການແບ່ງແຍກຈາກສິດນຳໃຊ້ທີ່ດິນຮ່ວມກັນ
- ການແບ່ງແຍກເພື່ອສືບທອດມູນມໍຣະດົກ
- ການແບ່ງແຍກເພື່ອມອບ- ໂອນ
- ການແບ່ງແຍກເພື່ອການເວນຄືນຂອງລັດ



## 2. ການໂຮມຕອນດິນ

**ການໂຮມຕອນດິນ ແມ່ນການລວມຕອນດິນທີ່ມີເຂດແດນຕິດຕໍ່ກັນ 2 ຕອນຂຶ້ນໄປເຂົ້າກັນເປັນທີ່ດິນຕອນດຽວ.**



## ເງື່ອນໄຂການໂຮມຕອນດິນເຂົ້າກັນ

- ຕອນດິນທີ່ມີຊາຍແດນຕິດຈອດກັນຢ່າງໜ້ອຍໜຶ່ງຂ້າງ
- ຕອນດິນທີ່ຈະໂຮມເຂົ້າກັນອາດມີເຈົ້າຂອງສິດນຳໃຊ້ຜູ້ດຽວ ຫຼື ຫຼາຍຄົນກໍໄດ້ ໃນກໍລະນີນີ້ແມ່ນ ສິດນຳໃຊ້ທີ່ດິນຮ່ວມກັນ.
- ໃນກໍລະນີ ມີພຽງຕອນດິນໃດໜຶ່ງໃນຈຳນວນຕອນດິນທີ່ຈະໂຮມເຂົ້າກັນມີສັນຍາຄ້ຳປະກັນການກູ້ຢືມ ຫຼື ອື່ນໆ ສັນຍາດັ່ງກ່າວຕ້ອງຖືກລຶບລ້າງກ່ອນຈຶ່ງສາມາດໂຮມກັນໄດ້.



## 3. ການປ່ຽນແປງເຂດແດນຕອນດິນ

ຖ້າຕ້ອງການເຄື່ອນຍ້າຍຫຼັກເຂດແດນທີ່ດິນ ຫຼື ວ່າກຳນົດທີ່ຕັ້ງຂອງຫຼັກເຂດທີ່ດິນຄືນໃໝ່ ຕ້ອງໄດ້ນຳສະເໜີຫາອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງລົງມາດຳເນີນການ.



## 4. ການຈົດທະບຽນການປ່ຽນແປງເຂດແດນຂອງຕອນດິນ

- ປະກອບເອກະສານ, ຄຳຮ້ອງຢູ່ອົງການຄຸ້ມຄອງທີ່ດິນປະຈຳເມືອງ ຫຼື ປະຈຳແຂວງ/ນະຄອນຫຼວງ.
- ອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງຈະແຕ່ງຕັ້ງທີມງານວິຊາການລົງສົມທົບກັບອົງການຈັດຕັ້ງບ້ານເພື່ອສຳຫຼວດວັດແທກ ແລະ ຝັງຫຼັກເຂດໃໝ່.
- ອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງອອກໃບຕາດິນໃໝ່ໃຫ້.
- ການຈົດທະບຽນແບ່ງແຍກ, ໂຮມຕອນດິນ ຫຼື ປ່ຽນແປງເຂດແດນຂອງຕອນດິນແມ່ນໃຊ້ເວລາປະມານ 10 ມື້ (ທາງລັດຖະການ)

